สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ອົງການດັດສົມໂທລະຄົມມະນາຄົມ

ເລກທີ 482 /ອດທ

ນະຄອນຫຼວງວຽງຈັນ, ວັນທີ 26 ພຶດສະພາ 2021

# ແຈ້ງການ

ເຖິງ: ທ່ານ ຜູ້ອຳນວຍການ ບໍລິສັດ ລາວໂທລະຄົມມະນາຄົມມະຫາຊົນ;
ທ່ານ ຜູ້ອຳນວຍການ ບໍລິສັດ ອີທີແອລ ຈຳກັດ;
ທ່ານ ຜູ້ອຳນວຍການ ບໍລິສັດ ສະຕາໂທລະຄົມມະນາຄົມ ຈຳກັດ;
ທ່ານ ຜູ້ອຳນວຍການ ບໍລິສັດ ທີພລັດດິຈິຕອນ ຈຳກັດ;
ທ່ານ ຜູ້ອຳນວຍການ ບໍລິສັດ ດາວທຽມລາວເອເຊຍ-ປາຊີຟິກ ຈຳກັດ;
ທ່ານ ຜູ້ອຳນວຍການ ບໍລິສັດ ພລາເນັດ ຈຳກັດ;
ທ່ານ ຜູ້ອຳນວຍການ ບໍລິສັດ ເບສ ເທເລຄອມ ຈຳກັດ.

ເລື່ອງ: ອອກມະໂຍບາຍສືບຕໍ່ເພື່ອຊ່ວຍເຫຼືອສັງຄົມ ໃນຊ່ວງທີ່ມີການແຜ່ລະບາດຂອງພະຍາໂຄວິດ-19.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການດັດສົມໂທລະຄົມມະນາຄົມ ສະບັບ ເລກທີ 1684/ປທສ, ລົງວັນທີ 05 ເມສາ 2017;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021;

ອົງການດັດສົມໂທລະຄົມມະນາຄົມ ຂໍຖືເປັນກຽດແຈ້ງມາຍັງ ບັນດາທ່ານຜູ້ອຳນວຍການ ບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຈັດຕັ້ງປະຕິບັດສືບຕໍ່ນະໂຍບາຍເພື່ອຊ່ວຍເຫຼືອສັງຄົມໃນຊ່ວງໄລຍະທີ່ມີການແຜ່ລະບາດຂອງພະຍາໂຄວິດ-19 ເພື່ອເປັນການອຳນວຍຄວາມສະດວກ ແລະ ລຸດຜ່ອນຄ່າໃຊ້ຈ່າຍ ສຳລັບການເຮັດວຽກຢູ່ບ້ານ,ການຮຽນ, ການສອນ ທາງໄກ ແລະ ຂົງເຂດປິ່ນອ້ອມອື່ນໆ, ສະນັ້ນ ຈຶ່ງອອກແຈ້ງການມາຍັງທ່ານເພື່ອສືບຕໍ່ ຈັດຕັ້ງປະຕິບັດດັ່ງນີ້:

1. ໃຫ້ທຸກບໍລິສັດ ສ້າງແພັກເກັດພິເສດ ສຳລັບບໍລິການເບີລາຍເດືອນ, ເບີຕື່ມເງິນ(020) ແລະ ຊິມເນັດ ໃນລາຄາ 3.000ກີບ, ໄດ້ຮັບດາຕ້າ 2GB, ໄລຍະເວລາໜ່າໃຊ້ 24ຊົ່ວໂມງ (3000ກີບ/2GB/24ຊົ່ວໂມງ);



ສแกนด้วย CamScanner

Scanned with CamScanner

2. ໃຫ້ນຳໃຊ້ລະຫັດແພັກເກັດ *111*30# ເພື່ອຄວາມເປັນເອກະພາບຂອງທຸກບໍລິສັດ ແລະ ເພື່ອຄວາມເຂົ້າໃຈງ່າຍຂອງປະຊາຊົນທີ່ນຳໃຊ້ທຸກເຄືອຂ່າຍ;
3. ໃຫ້ເພີ້ມຄວາມໄວ ຂອງທຸກແພັກເກັດອິນເຕີເນັດ ສຳລັບບໍລິການມືຖືຂຶ້ນ 10%;
4. ໃຫ້ເພີ້ມຄວາມໄວ ຂອງບໍລິການອິນເຕີເນັດມີສາຍ ທີ່ເປັນອິນເຕີເນັດພາຍໃນປະເທດຂຶ້ນ 10% ສຳລັບທຸກປະເພດບໍລິການ;
5. ໃຫ້ເພີ້ມຄວາມໄວ ຂອງບໍລິການອິນເຕີເນັດມີສາຍ ທີ່ເປັນອິນເຕີເນັດອອກນອກປະເທດຂຶ້ນ 5% ສຳລັບທຸກປະເພດບໍລິການ;
6. ເລີ່ມຈັດຕັ້ງປະຕິບັດນັບແຕ່ ວັນທີ 28 ພຶດສະພາ ຫາ ວັນທີ 30 ມິຖຸນາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ຮັກສາການ ຫົວໜ້າອົງການ
ຫົວໜ້າຄະນະໂທລະຄົມ ແລະ ອິນເຕີເນັດ

ສຸດໃຈ ລໍລອບສີ

**ສຳເນົາສົ່ງ:**

1. ບັນດາບໍລິສັດ 1ສະບັບ ເພື່ອປະຕິບັດ;
2. ຄະນະລັດຖະມົນຕີ ທ່ານລະ 1ສະບັບ ເພື່ອຮັບຊາບ;
3. ຫ້ອງການ 1ສະບັບ ເພື່ອຮັບຊາບ;
4. ເກັບມ້ຽນ 1ສະບັບ.



ສແກນດ້ວຍ CamScanner

Scanned with CamScanner